

5

# ລູກຂອງທ່ານສາມາດໄດ້ຍິນສຽງຫຍັງແດ່?

ເດັກບາງຄົນກໍ່ຫູໜວກສະໜິດ ແລະ ບໍ່ສາມາດໄດ້ຍິນສິ່ງໃດເລີຍ ຫຼື ສາມາດໄດ້ຍິນພຽງແຕ່ສຽງດັງໆເທົ່ານັ້ນ. ເມື່ອເດັກຍັງອ່ອນຜູ້ເປັນພໍ່ແມ່ສາມາດສັງເກດເຫັນວ່າລູກຂອງຕົນບໍ່ສາມາດຮັບຮູ້ທາງຫູໄດ້ ເພາະວ່າ ເດັກບໍ່ມີການໝູນຫົວຂອງພວກເຂົາ ຫຼື ຕອບສະໜອງ, ເຖິງແມ່ນວ່າ ຈະເປັນສຽງທີ່ດັງແຮງກໍຕາມ.




ຍັງມີເດັກຫຼາຍໆຄົນທີ່ພິການທາງຫູທີ່ສາມາດໄດ້ຍິນສຽງສ່ວນໃດສ່ວນໜຶ່ງ. ກໍ່ລະນີການສູນເສຍການຟັງປະເພດດັ່ງກ່າວນີ້ ແມ່ນເປັນການຍາກຫຼາຍສໍາລັບພໍ່ແມ່ໃນການສັງເກດ. ເດັກອາດຈະສະແດງເຮັດໃຫ້ແປກໃຈ ຫຼື ມີການໝູນຫົວຂອງເຂົາໄປຫາບ່ອນທີ່ມີສຽງດັງ ແຕ່ສຽງທີ່ຄ່ອຍຜັດບໍ່ໄດ້ຜົນ. ເຂົາອາດຈະ




ຕອບສະໜອງພຽງແຕ່ປະເພດສຽງສະເພາະໃດໜຶ່ງ. ເດັກບາງຄົນຜັດຍັງສາມາດໄດ້ຍິນພຽງເລັກໜ້ອຍ ເມື່ອມີຄົນເວົ້າກັບພວກເຂົາ. ພວກເຂົາອາດຈະຮຽນຮູ້ຊ້າໃນການຈົດຈໍາ ແລະ ຕອບສະໜອງບາງຄໍາສັບ ແຕ່ພວກເຂົາບໍ່ໄດ້ຍິນໝົດທຸກຄໍາສັບທັງໝົດຢ່າງຈະແຈ້ງ ພໍທີ່ຈະເຂົ້າໃຈໄດ້, ເດັກທີ່ມີການສູນເສຍການຟັງປະເພດນີ້ ແມ່ນຈະມີຄວາມຊັກຊ້າໃນການຮຽນເວົ້າ.

ເດັກຫຼາຍໆຄົນທີ່ສູນເສຍການຟັງເນື່ອງຈາກການຊຶມເຊື້ອທາງຫູເປັນເວລາຍາວນານ ແລະ ຫຼາຍຄັ້ງຊໍ້າຊາກກັນ ຫຼື ອີກສາເຫດໜຶ່ງອາດເປັນຜົນເນື່ອງມາຈາກຢາ. ຜູ້ເປັນພໍ່ແມ່ ອາດບໍ່ສັງເກດເຫັນວ່າເດັກໄດ້ສູນເສຍການຟັງຂອງເຂົາໄປຢ່າງຊ້າໆ ຈົນກະທັ້ງເຂົາມີອາຍຸໄດ້ 4-5 ປີ ແຕ່ກໍ່ບໍ່ທັນຮຽນເວົ້າເທື່ອ ຫຼື ບໍ່ທັນສາມາດເວົ້າໄດ້ຢ່າງຈະແຈ້ງໄດ້.

ຖ້າທ່ານຫາກຮູ້ວ່າ ລູກຂອງທ່ານສາມາດຮັບຮູ້ທາງຫູໄດ້ຫຼາຍພຽງໃດນັ້ນ ມັນຈະຊ່ວຍໃຫ້ທ່ານຮູ້ວ່າ ຈະໃຫ້ການຊ່ວຍເຫຼືອແບບໃດແກ່ເຂົາ ເພື່ອໃຫ້ເຂົາສາມາດສື່ສານໄດ້. ບາງຄັ້ງພໍ່ແມ່, ເດັກຄົນອື່ນໆ ຫຼື ຄູຄິດວ່າ ເດັກທີ່ສູນເສຍການຟັງນັ້ນແມ່ນການຈະເລີນເຕີບໂຕທາງດ້ານຈິດໃຈຊ້າເທົ່ານັ້ນ. ຖ້າຫາກເດັກທີ່ພິການທາງຫູຫາກໄດ້ຮັບການຊ່ວຍເຫຼືອເປັນພິເສດໃນການຮຽນຮູ້ການສື່ສານນັ້ນ, ພວກເຂົາເກືອບທັງໝົດສາມາດຮຽນ ແລະ ໄດ້ຮັບການສຶກສາຄືກັບເດັກຄົນອື່ນໄດ້. ດັ່ງນັ້ນ ມັນຈຶ່ງມີຄວາມສໍາຄັນຫຼາຍທີ່ຈະຊອກຮູ້ວ່າມີຫຍັງຜິດປົກກະຕິ ຫຼື ບໍ່ກ່ຽວກັບການຮັບຮູ້ທາງຫູຂອງເດັກ.

# ຄວາມເຂົ້າໃຈກ່ຽວກັບສຽງ

ຖ້າຫາກພໍ່ແມ່ຮູ້ກ່ຽວກັບປະເພດສຽງຕ່າງໆ, ມັນກໍ່ຈະຊ່ວຍໃຫ້ພວກເຂົາເຂົ້າໃຈໄດ້ ສຽງແຮງປານໃດ ແລະ ສຽງປະເພດໃດທີ່ລູກຂອງຕົນສາມາດຮັບຟັງໄດ້.

## ຄວາມດັງຂອງສຽງ

ບາງສຽງກໍ່ດັງແຮງກວ່າສຽງອື່ນໆ. ສຽງດັງທີ່ຢູ່ໃກ້ກວ່າຈະດັງກວ່າສຽງດັງທີ່ຢູ່ຫ່າງອອກໄປ.



*ລົດຈັກແມ່ນຈະມີສຽງດັງກວ່າຄົນຍ່າງ, ເມື່ອລົດຈັກຄັນທີ່ເຂົ້າມາໃກ້ແມ່ນມັນຈະມີສຽງດັງກວ່າຄັນທີ່ຢູ່ໄກອອກໄປ.*

ບາງສຽງກໍ່ສາມາດເຮັດໃຫ້ດັງແຮງຂຶ້ນ ຫຼື ດັງຄ່ອຍລົງໄດ້. ຕົວຢ່າງ: ທ່ານສາມາດເພີ່ມຄວາມດັງຂອງວິທະຍຸໄດ້ ຫຼື ທ່ານສາມາດເຮັດໃຫ້ສຽງຂອງທ່ານຄ່ອຍລົງໄດ້ ໂດຍການປ່ຽນຈາກການແຂກຮ້ອງໃສ່ມາເປັນການກະຊິບ.

*ສຽງດັງ*



*ສຽງຄ່ອຍ*



## ລະດັບຂອງສຽງ

ລະດັບຂອງສຽງແມ່ນຂະໜາດຂອງສຽງນັ້ນຕ່ຳ ຫຼື ສູງພຽງໃດເຊັ່ນ: ຢູ່ໃນດົນຕີ, ສຽງສາມາດຂຶ້ນ ແລະ ລົງໄດ້ຈາກລະດັບສູງຫາຕ່ຳ.

### ລະດັບສຽງສູງ



*ສຽງນົກຮ້ອງ*



*ສຽງເປົ່າປີ່*



*ສຽງຖອກນ້ຳ*



*ສຽງເດັກນ້ອຍໄຫ້*

*ສຽງສູງ ແມ່ນຈະເປັນສຽງທີ່ຄົມ ແລະ ບາງ, ເຊິ່ງສາມາດຮູ້ສຶກໄດ້ໃນເມື່ອມັນຜ່ານເຂົ້າຫູຂອງເຮົາ.*

### ລະດັບສຽງຕ່ຳ



*ສຽງງົວຮ້ອງ*



*ສຽງຕີກອງ*



*ສຽງຟ້າຮ້ອງ*



*ສຽງຜູ້ຊາຍ*

*ສຽງຕ່ຳ ແມ່ນເປັນສຽງເຕັມ ແລະ ສຽງໃຫຍ່, ເຊິ່ງທ່ານສາມາດຮູ້ສຶກໄດ້ໃນກະດູກຂອງທ່ານ.*

ສຽງຄຳເວົ້າທີ່ແຕກຕ່າງກັນນັ້ນ ອາດຈະມີລະດັບສຽງສູງ ຫຼື ຕ່ຳ. ຕົວຢ່າງ: ຕ້ອງເຮັດສຽງຍາວ “ໂອ...” ແລະ ສຽງ “ມມມ໌...” (ສຽງນີ້ຄ້າຍກັບວ່າເຈົ້າງັບປາກແລ້ວເວົ້າ ຮື ຍາວໆ ແລະ ມີສຽງ ມ ຢູ່ນຳ) ແມ່ນລະດັບສຽງຕ່ຳ, ສ່ວນສຽງຍາວ “ອີ...” ແມ່ນມີລະດັບສຽງກາງ. ແຕ່ສຽງ “ສສສ໌...” ແລະ ສຽງ “ຟຟຟ໌...” ແມ່ນລະດັບສຽງສູງຕ້ອງມີລົມແຮງອອກຈາກຫວ່າງແຂ້ວ.

# ການສູນເສຍການຟັງມີຫຼາຍປະເພດ

ເດັກຜູ້ທີ່ມີບັນຫາໃນການຟັງນັ້ນ, ໂດຍປົກກະຕິແລ້ວ ລ້ວນແຕ່ມີຄວາມຫຍຸ້ງຍາກໃນການຟັງຄວາມດັງຂອງສຽງ ແລະ ລະດັບສຽງ. ຕົວຢ່າງເຊັ່ນ:

*ເດັກຄົນນີ້ ບໍ່ສາມາດຮັບຟັງສຽງໄດ້ດີ, ລາວບໍ່ສາມາດໄດ້ຍິນສຽງທີ່ເປັນລະດັບສຽງສູງໄດ້.*



*ລາວບໍ່ສາມາດໄດ້ຍິນສຽງທີ່ພໍ່ຂອງລາວເປົ່າປີ່ໄດ້, ແຕ່ລາວຜັດສາມາດໄດ້ຍິນສຽງຕ່ຳ ແລະ ສຽງທີ່ດັງແຮງໄດ້ ເຊັ່ນ: ສຽງກອງ.*

*ເດັກຍິງຄົນນີ້ບໍ່ສາມາດໄດ້ຍິນສຽງຢ່າງຈະແຈ້ງ. ເຊິ່ງລາວບໍ່ສາມາດຟັງສຽງລະດັບສຽງກາງໄດ້.*



*ແຕ່ລາວຜັດສາມາດໄດ້ຍິນສຽງລະດັບສຽງສູງໄດ້, ສະນັ້ນ ລາວຈຶ່ງສາມາດໄດ້ຍິນສຽງເດັກນ້ອຍໄຫ້ ແລະ ລາວຍັງສາມາດໄດ້ຍິນສຽງລະດັບສຽງຕ່ຳໄດ້ ເຊັ່ນ: ສຽງເວົ້າຂອງພໍ່ຂອງລາວ. ແຕ່ລາວຜັດບໍ່ສາມາດໄດ້ຍິນສຽງເວົ້າຂອງແມ່ລາວໄດ້.*

*ເດັກຊາຍຄົນນີ້ບໍ່ສາມາດຮັບຟັງໄດ້ດີປານໃດ. ລາວບໍ່ສາມາດໄດ້ຍິນສຽງລະດັບສຽງຕ່ຳ.*



*ລາວບໍ່ສາມາດໄດ້ຍິນສຽງທີ່ພໍ່ຂອງລາວຕີກອງໄດ້, ເຖິງແມ່ນວ່າ ລາວຈະຮູ້ສຶກໄດ້ເຖິງຄວາມສັ່ນຂອງມັນກໍ່ຕາມ. ແຕ່ລາວຜັດສາມາດໄດ້ຍິນສຽງລະດັບສຽງສູງໄດ້.*

*ເດັກຊາຍຄົນນີ້ແມ່ນຫູໜວກຢ່າງສະໜິດ, ລາວບໍ່ສາມາດໄດ້ຍິນສຽງໃດໆ ທັງສິ້ນ.*



*ເດີ່ນບ້ານ ຫຼື ສຽງລົດບັນທຸກຕາມທ້ອງຖະໜົນ, ແລະ ບໍ່ມີຜົນກະທົບຫຍັງເຖິງວ່າສຽງເຫຼົ່ານັ້ນຈະດັງພຽງໃດກໍ່ຕາມ.*

# ສຽງໃດແດ່ທີ່ລູກຂອງທ່ານສາມາດໄດ້ຍິນ?

ຖ້າຫາກລູກຂອງທ່ານສາມາດໄດ້ຍິນພຽງເລັກໜ້ອຍແລ້ວ, ຈົ່ງພະຍາຍາມຊອກຮູ້ວ່າ ມີສຽງໃດແດ່ທີ່ເຂົາສາມາດໄດ້ຍິນ ເຊິ່ງມັນຈະສາມາດຊ່ວຍທ່ານໄດ້ຫຼາຍ. ເມື່ອທ່ານມີຄວາມຮູ້ຫລາຍກ່ຽວກັບຄວາມສາມາດໃນການຮັບຮູ້ທາງຫູຂອງລູກທ່ານ ມັນຈະເປັນຜົນດີ. ເພາະວ່າ ທ່ານຈະສາມາດສື່ສານໃນວິທີທີ່ເຂົາສາມາດເຂົ້າໃຈໄດ້.

## ການສັງເກດວ່າລູກຂອງທ່ານ ຕອບສະໜອງຕໍ່ສຽງແນວໃດ

ເປັນການຍາກຫຼາຍທີ່ຈະຮູ້ວ່າ ເມື່ອໃດເດັກຈຶ່ງສາມາດໄດ້ຍິນສຽງ ໂດຍສະເພາະ ກັບເດັກອ່ອນ, ແຕ່ທ່ານຈະຮູ້ຖ້າຫາກລູກຂອງທ່ານໄດ້ຍິນສຽງ ເພາະວ່າເຂົາອາດຈະ:

- ເຄື່ອນເໜັງແຂນ ແລະ ຂາຂອງເຂົາ.
- ປ່ຽນຮູບລັກສະນະໃບໜ້າຂອງພວກເຂົາ.
- ຢຸດນິ້ງບໍ່ເຄື່ອນໄຫວ.
- ສ້າງສຽງຂອງເຂົາອອກມາ
- ຍິ້ມ ຫຼື ຫົວ.
- ຫັນໄປຫາສຽງດັ່ງດັ່ງກ່າວນັ້ນ ຫຼື ອຽງຫູຂອງເຂົາເພື່ອຟັງສຽງນັ້ນ.
- ສະດຸ້ງຕົກໃຈ, ມືນຕາກວ້າງ ຫຼື ກະພິບຕາ.




## ລູກຂອງທ່ານຄ້າຍຄືກັບວ່າໄດ້ຍິນສຽງໃດສຽງໜຶ່ງຫຼືບໍ?

ການຊອກຮູ້ວ່າມີສຽງໃດແດ່ທີ່ເດັກສາມາດໄດ້ຍິນນັ້ນ ຈົ່ງພະຍາຍາມສັງເກດເຂົາຢ່າງໃກ້ຊິດໃນຕະຫຼອດວັນ ແລະ ຖາມຕົນເອງວ່າ:

- ເຂົາສາມາດໄດ້ຍິນສຽງລະດັບສຽງສູງ ຫຼື ສຽງລະດັບສຽງຕ່ຳໄດ້ເກືອບທັງໝົດ ຫຼື ເປັນສຽງທີ່ມີການປະສົມປະສານຂອງທັງສອງສຽງນັ້ນ?
- ເຂົາສາມາດໄດ້ຍິນເປັນບາງເວລາບໍ?
- ເຂົາສາມາດໄດ້ຍິນພຽງແຕ່ຢູ່ໃນຫ້ອງທີ່ມີດງຽບບໍ?
- ເຂົາສາມາດຍໄດ້ຍິນແຕ່ສຽງທີ່ດັງເທົ່ານັ້ນບໍ?



*ເມື່ອຫ້ອງມີດງຽບ ໂກຟີ ສາມາດໄດ້ຍິນສຽງຂອງຮູບກັບທີ່ຕົກລົງມາໄດ້.*



*ໂກຟີ ອາດຈະບໍ່ສາມາດໄດ້ຍິນສຽງຮູບກັບທີ່ຕົກລົງມາໄດ້ ໃນເມື່ອມີສຽງອື່ນລົບກວນຢູ່ໃນຫ້ອງ.*

## ການກວດສອບຄວາມສາມາດໃນການຟັງຂອງເດັກຢູ່ເຮືອນ

ມັນມີຄວາມຫຍຸ້ງຍາກໃນການກວດສອບຄວາມສາມາດໃນການຟັງຂອງເດັກນ້ອຍ. ແຕ່ຖ້າຫາກເມື່ອໃດທີ່ທ່ານໄດ້ວາງແຜນທີ່ຈະໃຫ້ຜູ້ຊ່ຽວຊານກວດສອບຄວາມສາມາດໃນການຟັງຂອງລູກຂອງທ່ານແລ້ວ, ມັນຈະມີສ່ວນຊ່ວຍໄດ້ຫຼາຍ ຖ້າທ່ານຫາກສາມາດກວດສອບຄວາມອາດສາມາດໃນການຟັງຂອງລູກທ່ານກ່ອນ. ຕໍ່ຈາກນັ້ນ ທ່ານເອງກໍ່ສາມາດທີ່ຈະໃຫ້ຂໍ້ມູນແກ່ຜູ້ຊ່ຽວຊານນັ້ນໄດ້ ແລະ ທ່ານເອງກໍ່ຈະສາມາດເຂົ້າໃຈໄດ້ດີຂຶ້ນວ່າ ຜູ້ຊ່ຽວຊານຈະເຮັດຫຍັງກັບລູກຂອງທ່ານ.



ເຊັ່ນດຽວກັບການກວດສອບການຟັງຢູ່ໃນເຮືອນ ເຊິ່ງເປັນບ່ອນທີ່ມີຄວາມເປັນອິດສະຫຼະ ແລະ ນຳໃຊ້ວັດຖຸອຸປະກອນທີ່ຫາໄດ້ງ່າຍ ແລະ ໃນການກວດສອບດ້ວຍຕົນເອງກໍ່ຈະເຮັດໃຫ້ທ່ານມີຄວາມໝັ້ນໃຈຫຼາຍຂຶ້ນ ໃນການຕັດສິນໃຈກ່ຽວກັບການພັດທະນາ ແລະ ການດູແລລູກຂອງທ່ານ ແລະ ມັນຍັງເປັນວິທີທີ່ດີສຳລັບໝູ່ເພື່ອນ ແລະ ສະມາຊິກໃນຄອບຄົວທີ່ຈະມີສ່ວນຮ່ວມຫຼາຍຂຶ້ນໃນການເຮັດໃຫ້ລູກຂອງທ່ານຮຽນຮູ້ໃນການສື່ສານ.

ຈົ່ງຈື່ໄວ້ສະເໝີວ່າ ລູກຂອງທ່ານອາດຈະຕອບສະໜອງຕໍ່:

- ສິ່ງທີ່ເຂົາໄດ້ເຫັນ, ນີ້ບໍ່ໄດ້ໝາຍເຖິງສຽງ.
- ການສັ່ນສະເທືອນທີ່ສາມາດສ້າງຂຶ້ນມານັ້ນ.
- ການສະແດງສີໜ້າ ຫຼື ພາສາມືຂອງທ່ານ.

ແລະ ລູກຂອງທ່ານອາດຈະບໍ່ຕອບສະໜອງເລີຍຖ້າຫາກ:

- ເຂົາຍັງຫຍຸ້ງຢູ່ກັບການເຮັດສິ່ງອື່ນ.
- ເຂົາເຈັບປ່ວຍ ຫຼື ມີອາການຕິດເຊື້ອຂອງຫູ.
- ເຂົາຫາກອິດເມື່ອຍ, ເບື່ອ ຫຼື ອາລົມບໍ່ດີ.

# ວິທີການກວດສອບຄວາມສາມາດໃນການຟັງຂອງລູກທ່ານ

ຈົ່ງພະຍາຍາມສັງເກດເບິ່ງວ່າ ມີປະເພດສຽງໃດແດ່ທີ່ລູກຂອງທ່ານ ຕອບສະໜອງກັບໃນແຕ່ລະວັນ. ວິທີນີ້ເປັນວິທີທີ່ດີ ແລະ ທົ່ວໄປໃນການຮຽນຮູ້ ກ່ຽວກັບຄວາມອາດສາມາດໃນການຟັງຂອງລູກທ່ານ. ຕໍ່ຈາກນັ້ນ ທ່ານສາມາດກວດສອບເບິ່ງວ່າ ສຽງໃດແດ່ທີ່ເຂົາສາມາດໄດ້ຍິນສາກ່ອນເຊັ່ນ: ສຽງວັດຖຸໃດແດ່, ຕໍ່ມາແມ່ນສຽງຄຳເວົ້າໃດແດ່ທີ່ເຂົາໄດ້ຍິນເມື່ອຄົນເຮົາລົມກັນ.



ໃນການປະຕິບັດສິ່ງດັ່ງກ່າວນີ້, ທ່ານຕ້ອງການມີ:

- ສະຖານທີ່ທີ່ມີດງຽບ, ບໍ່ມີສິ່ງລົບກວນ.
- ອຸປະກອນທີ່ຊອກຫາໄດ້ງ່າຍຈຳນວນໜຶ່ງ.
- ຜູ້ຊ່ວຍອີກ 2 ຄົນ.

ທຳອິດແມ່ນກວດສອບຄວາມສາມາດໃນການຟັງຂອງເດັກຜູ້ທີ່ມີອາຍຸຮຸ່ນດຽວກັບລູກຂອງທ່ານວ່າ ການຟັງຂອງຜູ້ໃດທີ່ເປັນປົກກະຕິ. ເຝິກຊ້ອມຈົນທ່ານສາມາດຮູ້ແນ່ນອນວ່າ ເດັກຈະມີການຕອບສະໜອງແນວໃດ ເມື່ອໄດ້ຍິນສຽງ.

- ຈົ່ງໃຫ້ການກວດສອບນັ້ນເປັນໄປຢ່າງສະບາຍ ແລະ ມ່ວນຊື່ນ.
- ຈົ່ງພະຍາມໃຊ້ເຄື່ອງຫຼິ້ນທີ່ຫຼາກຫຼາຍ ເພື່ອເປັນການເຮັດໃຫ້ເດັກບໍ່ເບື່ອໜ່າຍ.
- ຈົ່ງພະຍາຍາມໃຊ້ໄລຍະເວລາທີ່ສັ້ນໃນການກວດສອບ ໂດຍທີ່ທ່ານສາມາດທົດສອບຄວາມອາດສາມາດໃນການຟັງນັ້ນໄດ້ຫຼາຍກວ່າ 1 ຄັ້ງ.

## ► ກວດສອບຄວາມດັງ ແລະ ລະດັບຂອງສຽງ

ຜູ້ຊ່ວຍຄົນໜຶ່ງນັ່ງຢູ່ເບື້ອງໜ້າຂອງ ພໍ່ ຫຼື ແມ່ ແລະ ເດັກນັ້ນ. ເຊິ່ງເຂົາເອງຈະສ້າງ ແລະ ດຶງດູດຄວາມສົນໃຈຂອງເດັກດ້ວຍການສະແດງເຄື່ອງຫຼິ້ນ ໃຫ້ເດັກໄດ້ເຫັນ.




ສ່ວນຄົນອື່ນນັ້ນແມ່ນຢູ່ເບື້ອງຫຼັງ ໃນໄລຍະຫ່າງປະມານ 1 ແມັດ ແລະ ບໍ່ໃຫ້ເດັກສາມາດແນມເຫັນໄດ້, ເຊິ່ງບຸກຄົນດັ່ງກ່າວນັ້ນ ຈະເປັນຜູ້ທົດສອບ ແລ້ວຜູ້ທົດສອບນີ້ ຈະເປັນຜູ້ທີ່ສ້າງສຽງຂຶ້ນໃນແຕ່ລະເບື້ອງຂອງເດັກ ເພື່ອໃຫ້ເດັກສາມາດໄດ້ຍິນ. ຖ້າຫາກເດັກຫຼຽວໜ້າໄປເບິ່ງຜູ້ທົດສອບ, ຜູ້ທົດສອບນັ້ນ ບໍ່ຄວນມີປະຕິກິລິຍາໃດໆຕໍ່ເດັກ ແລະເດັກອາດຈະຍິ້ມ ຫຼື ແນມເບິ່ງເທົ່ານັ້ນ.

## ສິ່ງທີ່ທ່ານຕ້ອງການໃນການກວດສອບຄວາມອາດສາມາດໃນການຟັງ

ໃນການທົດສອບດັ່ງກ່າວນີ້ ທ່ານຈະຕ້ອງການອຸປະກອນທີ່ສ້າງສຽງຂຶ້ນແບບທຳມະດາ ເຊິ່ງຖືກສ້າງຂຶ້ນ ຈາກ 3 ກະປ໋ອງເປົ່າທີ່ຄືກັນດັ່ງລຸ່ມນີ້:



***1*** *ເອົາບິ້ງໄມ້ຖິ້ມລົງໃນປ໋ອງທີ 1 (ລະດັບສຽງຕ່ຳ)*



***2*** *ກຳເອົາແກ່ນໝາກຖົ່ວດິບແຫ້ງກຳໃຫຍ່ໜຶ່ງຖິ້ມລົງໃນປ໋ອງທີ 2 (ລະດັບສຽງກາງ)*



***3*** *ເອົາເຂົ້າສານກຳໃຫຍ່ໜຶ່ງຖິ້ມລົງໃນປ໋ອງທີ 3 (ລະດັບສຽງສູງ)*

ສັ່ນກະປ໋ອງນັ້ນຢ່າງເບົາໆ ກໍ່ຈະໄດ້ສຽງທີ່ຄ່ອຍ, ຖ້າຫາກສັ່ນກະປ໋ອງນັ້ນແຮງຂຶ້ນ ກໍ່ຈະໄດ້ສຽງລະດັບກາງ, ແຕ່ຖ້າຫາກສັ່ນກະປ໋ອງນັ້ນຢ່າງແຮງ ກໍ່ຈະໄດ້ລະດັບສຽງທີ່ດັງ. ຜູ້ທົດສອບຄວນເຝິກຊ້ອມ ການສັ່ນກະປ໋ອງ ຈົນກວ່າຈະສາມາດຄວບຄຸມສຽງຂອງມັນໄດ້ເສຍກ່ອນ.

## ວິທີການບັນທຶກສຽງທີ່ເດັກໄດ້ຍິນ

ນີ້ແມ່ນວິທີໜຶ່ງໃນການສ້າງຕາຕະລາງ ເພື່ອບັນທຶກວ່າ ສຽງໃດແດ່ທີ່ເດັກໄດ້ຍິນ. ໃນຕາຕະລາງຈະມີການແບ່ງອອກເປັນ 2 ພາກສ່ວນສໍາລັບຫູແຕ່ລະຂ້າງ ແລະ ແຕ່ລະຂ້າງນັ້ນ ກໍ່ຈະມີຫ້ອງຂອງລະດັບສຽງຕໍ່າ, ສຽງກາງ ແລະ ສຽງສູງ.

ທ່ານຈະໝາຍໃສ່ແຕ່ລະຫ້ອງໃນການບັນທຶກ ຖ້າເດັກ ຫາກໄດ້ຍິນສຽງແຕ່ລະສຽງນັ້ນ, ເມື່ອມັນເປັນສຽງທີ່ຄ່ອຍ ກໍ່ຈະຂີດອ້ອມເປັນວົງມົນໜຶ່ງ, ຖ້າເປັນສຽງໃນລະດັບກາງ ກໍ່ຈະຂີດອ້ອມສອງວົງມົນທີ່ຊ້ອນກັນ ແລະ ຖ້າເປັນສຽງດັງແຮງ ກໍ່ຈະຂີດອ້ອມສາມວົງມົນຊ້ອນກັນ. ຖ້າຫາກເດັກບໍ່ສາມາດໄດ້ຍິນສຽງຫຍັງໝົດ ເຖິງແມ່ນວ່າຈະສັ່ນກະປ໋ອງແຮງແລ້ວກໍ່ຕາມ ຈະບໍ່ໄດ້ໝາຍວົງມົນໃສ່.




○ = ລະດັບສຽງຕໍ່າ ◎ = ລະດັບສຽງກາງ ◎ = ລະດັບສຽງສູງ

# ການທົດສອບເດັກ

**ຜູ້ຊ່ວຍ:** ພະຍາຍາມດຶງດູດຄວາມສົນໃຈຂອງເດັກດ້ວຍເຄື່ອງຫຼິ້ນຢ່າງໃຈເຢັນ. ເມື່ອເດັກກໍາລັງໃສ່ໃຈຕໍ່ກັບເຄື່ອງຫຼິ້ນຢູ່ນັ້ນ ແລ້ວກໍ່ເອົາມືປົກປິດເຄື່ອງຫຼິ້ນນັ້ນໄວ້.



**ຜູ້ທົດສອບ:** ນໍາໃຊ້ກະປ໋ອງທີ່ໄດ້ກະກຽມໄວ້ນັ້ນເຮັດໃຫ້ເກີດສຽງລະດັບຕໍ່າໂດຍການປິດຝາກະປ໋ອງ ແລະ ສັ່ນກະປ໋ອງດັ່ງກ່າວ ປະມານ 3-4 ວິນາທີ ຢູ່ເບື້ອງຫຼັງຫູຂອງເດັກ ແຕ່ລະຂ້າງ. ທໍາອິດແມ່ນເຮັດເປັນສຽງທີ່ຄ່ອຍກ່ອນ.

**ຜູ້ຊ່ວຍ ແລະ ພໍ່ແມ່:** ສັງເກດເບິ່ງວ່າເດັກມີການຕອບສະໜອງຕໍ່ກັບສຽງດັ່ງກ່າວ.

**ຜູ້ຊ່ວຍ:** ຖ້າຫາກເດັກມີການຕອບສະໜອງແມ່ນໃຫ້ຍົກຫົວເບົາໆ ເພື່ອເປັນການສັນຍານໃຫ້ແກ່ຜູ້ທົດສອບທີ່ຢູ່ເບື້ອງຫຼັງວ່າ ເດັກມີການຕອບສະໜອງ.

**ຜູ້ທົດສອບ:** ຖ້າຫາກເດັກຕອບສະໜອງຕໍ່ສຽງຄ່ອຍນັ້ນ, ໝາຍໃສ່ຕາຕະລາງທີ່ຈັດໄວ້ນັ້ນ ດ້ວຍວົງມົນໜຶ່ງ ແລະ ກໍ່ຢຸດຕິການທົດສອບຫູເບື້ອງນັ້ນດ້ວຍລະດັບສຽງທີ່ຕ່ຳ.

ຖ້າຫາກເດັກບໍ່ຕອບສະໜອງຕໍ່ສຽງທີ່ຄ່ອຍດັ່ງກ່າວນັ້ນ, ແລ້ວກໍ່ສັ່ນກະປ໋ອງນັ້ນແຮງຂຶ້ນຕື່ມໜ້ອຍໜຶ່ງ ເພື່ອເຮັດໃຫ້ເກີດສຽງລະດັບກາງໂດຍໃຊ້ເວລາປະມານ 3-4 ວິນາທີ ເຊັ່ນກັນ ພ້ອມທັງລໍຖ້າເບິ່ງວ່າເດັກຕອບສະໜອງ.

ຖ້າຫາກເດັກຕອບສະໜອງຕໍ່ສຽງດັ່ງກ່າວນັ້ນ ກໍ່ໝາຍໃສ່ຕາຕະລາງນັ້ນ ດ້ວຍສອງວົງມົນຊ້ອນກັນ ແລະ ຢຸດຕິການທົດສອບກັບຫູເບື້ອງນັ້ນ ດ້ວຍລະດັບສຽງດັ່ງກ່າວ. ຖ້າເດັກຫາກບໍ່ຕອບສະໜອງ ຕໍ່ລະດັບສຽງກາງ ກໍ່ສັ່ນກະປ໋ອງຕື່ມອີກ ເຮັດໃຫ້ເກີດສຽງດັງ ໂດຍໃຊ້ເວລາ 3-4 ວິນາທີ ເຊັ່ນກັນ. ຖ້າເດັກຫາກຕອບສະໜອງຕໍ່ສຽງດັງນັ້ນ ກໍ່ໃຫ້ຂີດວົງມົນຊ້ອນກັນສາມຮອບ ໃສ່ຫ້ອງຕາຕະລາງທີ່ກຳນົດໄວ້ນັ້ນ.




ຈະບໍ່ມີການຂີດວົງມົນ ຖ້າຫາກເດັກບໍ່ຕອບສະໜອງຕໍ່ສຽງດັງກ່າວນັ້ນ.

ຕ້ອງແນ່ໃຈວ່າ ໄດ້ມີການທົດສອບຫູທັງສອງເບື້ອງດ້ວຍລະດັບສຽງທັງສາມນັ້ນ ໝົດແລ້ວ.

- ລະດັບສຽງຕ່ຳ. (ປ໋ອງທີ່ມີບີ້ງໄມ້)
- ລະດັບສຽງກາງ (ປ໋ອງທີ່ມີແກ່ນໝາກຖົ່ວ)
- ລະດັບສຽງສູງ (ປ໋ອງທີ່ມີເມັດເຂົ້າ)

## ເວລາທີ່ທ່ານສຳເລັດ

ປຽບທຽບເບິ່ງແບບຢ່າງໃນການທົດສອບຄວາມສາມາດໃນການຟັງ ມັນອາດຈະມີຄວາມແຕກຕ່າງກັນຫຼາຍຂອງເດັກແຕ່ລະຄົນ.




ເດັກຄົນນີ້ ສາມາດໄດ້ຍິນສຽງຕ່ຳຫຼາຍກວ່າສຽງສູງ.

*ລະດັບສຽງສູງຕ້ອງດັງແຮງຈຶ່ງເຮັດໃຫ້ເຂົາໄດ້ຍິນໄດ້. ຫູເບື້ອງຂວາຂອງລາວແມ່ນສາມາດຮັບຟັງໄດ້ດີກວ່າຫູເບື້ອງຊາຍ.*




ເດັກຄົນນີ້ ແມ່ນພິການທາງຫູເກືອບສະໜິດ.

*ຫູເບື້ອງຊ້າຍຂອງລາວແມ່ນບໍ່ສາມາດໄດ້ຍິນສຽງໃດເລີຍ, ແຕ່ຫູເບື້ອງຂວາຂອງລາວ ແມ່ນສາມາດໄດ້ຍິນພຽງເລັກໜ້ອຍແຕ່ພຽງສະເພາະກັບສຽງລະດັບສຽງຕ່ຳທີ່ດັງແຮງເທົ່ານັ້ນ.*



# ສິ່ງທີ່ຈະຊ່ວຍເຮັດໃຫ້ໄດ້ຮັບຜົນດີທີ່ສຸດ



ຜູ້ທີ່ເປັນ ພໍ່ ຫຼື ແມ່ ຄວນຈະ

- ອູ້ມເດັກໄວ້ຢູ່ເທິງຕັກໃຫ້ແໜ້ນດີ ແຕ່ກໍ່ມີອິດສະລະພໍທີ່ຈະເຮັດໃຫ້ເດັກສາມາດຫັນໄປມາໄດ້.
- ບໍ່ມີປະຕິກິລິຍາໃດໆ ຕໍ່ສຽງຕ່າງໆ ທີ່ສ້າງຂຶ້ນໂດຍຜູ້ທົດສອບທີ່ຢູ່ເບື້ອງຫຼັງ.



ຜູ້ທົດສອບຄວນຈະ

- ຢູ່ເບື້ອງຫຼັງຂອງເດັກ.
- ສ້າງສຽງຂຶ້ນໂດຍທີ່ສຽງນັ້ນຕ້ອງຢູ່ລະດັບດຽວກັບໃບຫູຂອງເດັກ.
- ຢູ່ຫ່າງຈາກເດັກປະມານ 1 ແມັດ ໃນການສ້າງສຽງຕ່າງໆ.
- ສ້າງສຽງຂຶ້ນຢູ່ທາງເບື້ອງຊ້າຍ ແລະ ເບື້ອງຂວາຂອງເດັກ.



ຜູ້ຊ່ວຍຄວນຈະ

- ດຶງດູດຄວາມສົນໃຈຂອງເດັກໃຫ້ຢູ່ກັບເຄື່ອງຫຼິ້ນ.
- ໃຈເຢັນ ແລະ ມິດງຽບ.
- ບໍ່ແນມເບິ່ງຜູ້ທົດສອບທີ່ຢືນຢູ່ເບື້ອງຫຼັງ.
- ບໍ່ມີປະຕິກິລິຍາໃດໆຕໍ່ສຽງຕ່າງໆ ທີ່ສ້າງຂຶ້ນໂດຍ ຜູ້ທົດສອບ.

# ເດັກສາມາດໄດ້ຍິນສຽງຂອງຄໍາເວົ້າບໍ?

ສຽງຂອງພາສາຄໍາເວົ້າມີຫຼາຍລະດັບທີ່ແຕກຕ່າງກັນ, ເຊັ່ນ ສຽງໂຕ “ທ” (ເທີ), “ດ” (ເດີ) ແລະ “ສສສ໌...” ຈະເປັນສຽງສູງກວ່າ ສຽງ “ໂອ...”, “ອີ...” ແລະ “ມມມ໌...” (ເບິ່ງໜ້າທີ 49). ນີ້ກໍ່ໝາຍຄວາມ ວ່າ ລູກຂອງທ່ານ ອາດຈະສາມາດໄດ້ຍິນສຽງພາສາຄໍາເວົ້າໄດ້ແຕ່ບໍ່ແມ່ນທັງໝົດ.

ມັນຈະຊ່ວຍໃຫ້ຮູ້ ຖ້າລູກຂອງທ່ານຫາກສາມາດໄດ້ຍິນສຽງຄໍາເວົ້າທີ່ເປັນ ສຽງສູງ, ສຽງກາງ ຫຼື ສຽງຕໍ່າ ແລະ ລະດັບສຽງດັງພຽງໃດທີ່ເຂົາສາມາດໄດ້ຍິນ. ດັ່ງນັ້ນ ຈົ່ງພະຍາຍາມສັງເກດ ເບິ່ງບັນດາສຽງຕ່າງໆທີ່ເດັກຄ້າຍຄືກັບວ່າ ເຂົາສາມາດໄດ້ຍິນ ເມື່ອສະມາຊິກໃນຄອບຄົວເວົ້າລົມນັ້ນ.

ເດັກອາດຈະຄ້າຍຄືວ່າ ເຂົ້າໃຈໃນຄໍາເວົ້າ ເມື່ອໃນກໍລະນີທີ່ມີສະຖານະການໃດໜຶ່ງ ທີ່ເຮັດໃຫ້ມີຄວາມໝາຍຈະແຈ້ງຂຶ້ນ. ຕົວຢ່າງເຊັ່ນ: ຖ້າຄົນໃດຄົນໜຶ່ງຫາກເວົ້າກັບເດັກຄົນໜຶ່ງວ່າ “ຈັບເອົາໝາກບານ” ພ້ອມທັງຊີ້ມືໃສ່ ແລະ ແນມເບິ່ງ. ເດັກກໍ່ອາດຈັບເອົາໝາກບານນັ້ນ. ເຊິ່ງບາງເທື່ອເຂົາອາດຈະບໍ່ໄດ້ຍິນຄໍາເວົ້າດັ່ງກ່າວນັ້ນດອກ ແຕ່ອາດໄດ້ເຫັນບຸກຄົນດັ່ງກ່າວຊີ້ມືໃສ່ໝາກບານໜ່ວຍນັ້ນ.

ການຊອກຮູ້ວ່າ ເດັກສາມາດໄດ້ຍິນຄໍາເວົ້າ ຫຼື ບໍ່ນັ້ນ, ແມ່ນສາມາດຮູ້ໄດ້ໂດຍການນໍາໃຊ້ວັດຖຸ ທີ່ເຂົາຄຸ້ນເຄີຍ 3 ຫຼື 4 ຢ່າງ ເຂົ້າໃນການຫຼິ້ນເກມ ຫຼື ພາກສ່ວນໃດໜຶ່ງຂອງກິດຈະກໍາປະຈໍາວັນທີ່ເຂົາຮູ້ແລ້ວ. ເຮັດຄືແນວນີ້ 5 ຫາ 6 ຄັ້ງໃນການຊອກຮູ້ ຖ້າລູກຂອງທ່ານຫາກໄດ້ຍິນຊື່ຂອງວັດຖຸເຫຼົ່ານັ້ນ.

ລູກຂອງທ່ານອາດຈະຄ້າຍຄືກັບວ່າ ໄດ້ຍິນສຽງພຽງແຕ່ບາງຄັ້ງຄາວເທົ່ານັ້ນ, ແຕ່ບໍ່ແມ່ນຕະຫຼອດ. ນີ້ກໍ່ບໍ່ໄດ້ໝາຍຄວາມວ່າ ລູກຂອງທ່ານເປັນຄົນທີ່ດື້ດ້ານ. ເຂົາອາດຈະບໍ່ໄດ້ຍິນທ່ານກໍ່ເປັນໄດ້. ມີຫຼາຍໆສິ່ງທີ່ສາມາດກະທົບໃສ່ເຂົາ ໃນການຕອບສະໜອງຕໍ່ສຽງນັ້ນ ເຊັ່ນ: ໄລຍະເວລາຂອງມື້, ຄວາມຫິວ ຫຼື ວ່າ ລູກຂອງທ່ານຮູ້ສຶກຄືແນວໃດ ໃນມື້ນັ້ນ. ການເປັນໄຂ້ໜາວ ແລະ ຫູມີການຕິດເຊື້ອກໍ່ສາມາດສົ່ງຜົນກະທົບຕໍ່ການຟັງຂອງເດັກໃນໄລຍະຊົ່ວຄາວໄດ້.




*ທໍາອິດ, ເວົ້າຄໍາດັ່ງກ່າວ ໂດຍບໍ່ໄດ້ໃຫ້ຄໍາໃບ້ໃດໆ.*




*ຕໍ່ຈາກນັ້ນ, ຖ້າລູກຂອງທ່ານຫາກຍັງບໍ່ທັນເຂົ້າໃຈໃນການໃຊ້ຄໍາເວົ້າພຽງແຕ່ຢ່າງດຽວ ກໍ່ໃຫ້ເວົ້າຄໍາເວົ້າດັ່ງກ່າວນັ້ນອີກ ພ້ອມທັງ ແນມເບິ່ງວັດຖຸດັ່ງກ່າວນັ້ນ.*




*ຖ້າຫາກລູກຂອງທ່ານຍັງບໍ່ທັນເຂົ້າໃຈອີກ, ກໍ່ໃຫ້ເວົ້າຄໍາເວົ້າດັ່ງກ່າວອີກ ພ້ອມທັງແນມເບິ່ງວັດຖຸດັ່ງກ່າວ ແລະ ຊີ້ມືໃສ່.*

## ▶ ການກວດສອບສຽງເວົ້າທີ່ ແອນ້ອຍ ແລະ ເດັກສາມາດໄດ້ຍິນ

ໃນການກວດສອບພາສາຄຳເວົ້າ ແທນທີ່ຈະສັ່ນກະປ໋ອງ ເພື່ອສ້າງສຽງຂຶ້ນ, ຜູ້ທົດສອບ ຜັດຕ້ອງສ້າງສຽງຂຶ້ນດ້ວຍສຽງຂອງເຂົາເອງ.

ໃນການທົດສອບດັ່ງກ່າວນີ້ ທ່ານຈະໃຊ້ສຽງຄື:

1. ສຽງ "ມມມ໌..." (ສຽງຕ່ຳ)
2. ສຽງ "ໂອ..." (ສຽງກາງ)
3. ສຽງ "ສສສ໌..." (ສຽງສູງ)

(ເບິ່ງໜ້າທີ 49 ວິທີອອກສຽງ.)

ສຽງທີ່ເບົານັ້ນ ຄວນຈະໃຫ້ມັນຄ່ອຍເທົ່າທີ່ຈະເປັນໄປໄດ້. ບອກໃຫ້ຄົນທີ່ປົກກະຕິຟັງທ່ານ ແລະ ບອກທ່ານ ເມື່ອເຂົາສາມາດໄດ້ຍິນສຽງທີ່ທ່ານເວົ້າອອກໄປຢ່າງເບົາໆນັ້ນ.

ການທົດສອບແບບນີ້ແມ່ນເຮັດແບບວິທີດຽວກັນກັບການທົດສອບຄວາມດັງ ຂອງສຽງ ແລະ ລະດັບຂອງສຽງ. ທ່ານອາດຈະເລີ່ມດ້ວຍລະດັບສຽງຕ່ຳທີ່ສຸດ "ມມມ໌..." ໂດຍສ້າງເປັນສຽງເບົາໆ ໃນໄລຍະເວລາ 3 ຫາ 4 ວິນາທີ, ທີ່ຢູ່ທາງເບື້ອງຫຼັງຫູເບື້ອງຊ້າຍຂອງເດັກ. ແລ້ວສືບຕໍ່ເຮັດວິທີເດີມ ຈາກສຽງທີ່ຄ່ອຍເປັນສຽງທີ່ແຮງຂຶ້ນ, ຈາກຫູເບື້ອງຊ້າຍໄປຫາຫູເບື້ອງຂວາ, ຈາກລະດັບສຽງຕ່ຳໄປຫາລະດັບສຽງສູງ. ແຕ່ຕ້ອງລະມັດລະວັງບໍ່ເພີ່ມລະດັບຂອງສຽງໃນຂະນະທີ່ທ່ານເພີ່ມຄວາມດັງຂອງສຽງຂຶ້ນ.




## ການມີສ່ວນຮ່ວມຂອງເດັກ

ເດັກສາມາດມີບົດບາດສຳຄັນໃນການຊ່ວຍເຫຼືອການກວດສອບຄວາມອາດສາມາດ ໃນການຟັງຂອງອ້າຍ ຫຼື ນ້ອງຊາຍ, ເອື້ອຍ ຫຼື ນ້ອງສາວ ແລະ ເດັກຄົນອື່ນໆໃນຊຸມຊົນ.

## ▶ ວິທີການກວດສອບເດັກທາລົກອາຍຸ 4 ເດືອນ ແລະເດັກໃຫຍ່ກວ່າ

- ເຮັດສຽງດັງກ້ອງຈາກກະປ໋ອງ ຫຼື ນ້ຳເຕົ້າທີ່ມີໝາກຫີນນ້ອຍຢູ່ເບື້ອງໃນ. ໂດຍທີ່ເດັກຄືບຄານເຂົ້າມາທາງຫຼັງຂອງເດັກແດງຢ່າງເບົາໆ. ຈົ່ງແນ່ໃຈສະເໝີວ່າ ເດັກບໍ່ແນມເຫັນກ່ອນ. ສັ່ນໃຫ້ເກີດສຽງກ້ອງທີ່ຢູ່ທາງເບື້ອງຫຼັງຂອງເຂົາ, ເຊິ່ງທຳອິດແມ່ນເລີ່ມຈາກເບື້ອງໃດເບື້ອງໜຶ່ງສາກ່ອນ ແລ້ວປ່ຽນໄປເບື້ອງອື່ນຕໍ່. ຈົ່ງສັງເກດເບິ່ງວ່າແອນ້ອຍຕື່ນຕົກໃຈ.



- ເອີ້ນຊື່ເດັກທາລົກຈາກຫຼາຍໆບ່ອນທີ່ບໍ່ຊ້ຳກັນຢູ່ໃນຫ້ອງ. ພ້ອມສັງເກດເບິ່ງວ່າເຂົາ ຕອບສະໜອງຕໍ່ວິທີໃດໜຶ່ງ.






## ▶ ວິທີການກວດສອບຄວາມສາມາດໃນການຟັງຂອງເດັກນ້ອຍ. ການຫຼິ້ນເກມ: ສັດໂຕນັ້ນແມ່ນໂຕຫຍັງ?

ໃຫ້ເດັກຄົນໜຶ່ງເປັນຜູ້ເວົ້າ ໂດຍໃຫ້ເຂົາຢືນຫ່າງຈາກແຖວຂອງເດັກນ້ອຍໃນໄລຍະຫ່າງ 4 ແມັດ. ຢູ່ເບື້ອງຫຼັງຂອງເດັກແຕ່ລະຄົນຈະມີເດັກຜູ້ທີ່ໃຫຍ່ກວ່າທີ່ຖືປຶ້ມ ແລະ ສໍດໍາ.

ທໍາອິດ, ຜູ້ເວົ້າໃຊ້ສຽງແຮງຫຼາຍໃນການເອີ້ນ ຊື່ຂອງສັດທົ່ວໄປ. ເດັກນ້ອຍຈະກະຊິບບອກ ຊື່ສັດທີ່ ພວກເຂົາໄດ້ຍິນໃຫ້ແກ່ຄູ່ຂອງພວກເຂົາ ທີ່ມີອາຍຸຫຼາຍກວ່ານັ້ນ. ເດັກຜູ້ທີ່ໃຫຍ່ກວ່ານັ້ນ ກໍ່ຈະຂຽນລົງ ໃສ່ແຜ່ນເຈ້ຍ.

ຕໍ່ຈາກນັ້ນ ຜູ້ເວົ້າກໍ່ສືບຕໍ່ເວົ້າຊື່ສັດອື່ນໆ, ເຊິ່ງການເວົ້າແຕ່ລະຄັ້ງຕ້ອງມິດງຽບຈົນກວ່າທີ່ເດັກນັ້ນ ໄດ້ກະຊິບບອກຄູ່ຂອງເຂົາແລ້ວ ແລະ ເດັກຜູ້ທີ່ຢືນຢູ່ເບື້ອງຫຼັງ ກໍ່ຈະຈົດທຸກໆຊື່ຂອງສັດທີ່ເດັກບອກໃຫ້ຂຽນ.

ຫຼັງຈາກຜູ້ທີ່ເວົ້ານັ້ນ ໄດ້ເວົ້າຊື່ຂອງສັດຮອດ 10 ຊື່ແລ້ວ. ເອົາຄໍາເວົ້າຂອງເດັກທີ່ບອກໃຫ້ຂຽນ ລົງໃສ່ເຈ້ຍນັ້ນມາປຽບທຽບກັນ, ມີເດັກຄົນໃດບໍ່ທີ່ບໍ່ໄດ້ຍິນຄໍາສັບເທົ່າທຽມກັບຄົນອື່ນ ຫຼື ບໍ່ໄດ້ຍິນຊື່ສັດເຫຼົ່ານັ້ນຢ່າງຖືກຕ້ອງ ເຊິ່ງເຂົາອາດເປັນຜູ້ທີ່ມີບັນຫາທາງຫູໄດ້.

## ຈະເຮັດແນວໃດກັບຂໍ້ມູນດັ່ງກ່າວນີ້

ຖ້າຫາກລູກຂອງທ່ານສາມາດໄດ້ຍິນສຽງຈໍານວນໜຶ່ງ, ທ່ານສາມາດຊ່ວຍເຂົາຮຽນຮູ້ ໃຊ້ທັກສະການຟັງຂອງເຂົາໃຫ້ດີຂຶ້ນກວ່າເກົ່າ. ຈົ່ງເບິ່ງໃນບົດຕໍ່ໄປໃນການພັດທະນາທັກສະການຟັງ. ຫຼັງຈາກທີ່ໄດ້ເຮັດວຽກກ່ຽວກັບທັກສະການຟັງຂອງລູກຂອງທ່ານເປັນເວລາປະມານ 6 ເດືອນແລ້ວ, ຖ້າຫາກຜົນຂອງມັນຍັງຄືເກົ່າ, ຈົ່ງກວດສອບການຟັງຂອງເຂົາຄືນອີກ.

## ການກວດສອບນັ້ນສາມາດເຮັດໃນສູນສຸຂະພາບໄດ້

ຄຣີນິກ ຫຼື ສູນສຸຂະພາບ ອາດຈະສາມາດທົດສອບຄວາມສາມາດໃນການໄດ້ຍິນຂອງລູກທ່ານໄດ້. ການທົດສອບປະເພດນີ້ ແມ່ນມີຜົນປະໂຫຍດຫຼາຍ, ຖ້າທ່ານຫາກຄິດວ່າ ລູກຂອງທ່ານມີບັນຫາ ໃນການຟັງ ແຕ່ທ່ານບໍ່ຈໍາເປັນບອກວ່າມີສຽງປະເພດໃດແດ່ ທີ່ລູກຂອງທ່ານສາມາດໄດ້ຍິນ ຖ້າວ່າມີ.



ຖ້າໂຊກບໍ່ດີ, ຄຣີນິກທີ່ສາມາດຟັງໄດ້ນັ້ນ ອາດຈະຢູ່ຫ່າງໄກ ຫຼື ມີລາຄາແພງເກີນໄປ. ແຕ່ການທົດສອບຂອງຜູ້ຊ່ຽວຊານນັ້ນ ຈະມີຄວາມຈໍາເປັນຫຼາຍ ຖ້າລູກຂອງທ່ານຈະໃຊ້ເຄື່ອງຊ່ວຍໃນການຟັງ.

ຖ້າຫາກທ່ານໄດ້ມີການກວດສອບຄວາມສາມາດໃນການຟັງໃນສະຖານທີ່ ທີ່ເຂົາຄຸ້ນເຄີຍນັ້ນ, ເຂົາອາດຈະຮູ້ສຶກຢ້ານໜ້ອຍລົງ ແລະ ເຂົາກໍ່ຈະມີຄວາມເຂົ້າໃຈຫຼາຍຂຶ້ນກ່ຽວກັບສິ່ງທີ່ເຂົາຖືກບອກໃຫ້ເຮັດ.